# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາລານລະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

25-31 ສິງຫາ 2026
ປີທີ 15
ສະບັບທີ 1079


## ແຕ່ງຕັ້ງນາງ ສູນທອນ ໄຊຍະຈັກ ເປັນຮັກສາການແທນປະທານສະພາແຫ່ງຊາດ



(ສພຊ) - ຄະນະຈັດຕັ້ງສູນກາງພັກ ໄດ້ອອກແຈ້ງການກ່ຽວກັບການແຕ່ງຕັ້ງສະຫາຍ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮັກສາການແທນເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ, ຮອງປະທານສະພາແຫ່ງຊາດ ທັງເປັນຮອງປະທານຄະນະປະຈຳສະພາແຫ່ງຊາດ ຊຸດທີ X ເປັນຮັກສາການແທນປະທານສະພາແຫ່ງຊາດ ທັງເປັນຮັກສາການແທນປະທານຄະນະປະຈຳສະພາແຫ່ງຊາດ ຊຸດທີ X ນັບແຕ່ວັນທີ 18 ສິງຫາ 2026 ເປັນຕົ້ນໄປ ຈົນກວ່າຈະມີມະຕິຂອງກອງປະຊຸມສະພາແຫ່ງຊາດ ເພື່ອຮັບຮອງເອົາການເລືອກຕັ້ງປະທານສະພາແຫ່ງຊາດ ຊຸດທີ X.

## ເຝິກອົບຮົມການເຊື່ອມທັດສະນະບົດບາດຍິງ-ຊາຍ




(ສພຊ) - ກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດເພດຍິງໃນຫົວຂໍ້: ການເຊື່ອມທັດສະນະບົດບາດຍິງ-ຊາຍ ເຂົ້າໃນການຕິດຕາມກວດກາ ແລະ ທົບທວນກົດໝາຍ ໄດ້ຈັດຂຶ້ນລະຫວ່າງວັນທີ 19-20 ສິງຫາ 2026 ທີ່ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານນາງ ທຸມມາລີ ວົງພະຈັນ ປະທານກຳມາທິການກົດໝາຍ ແລະ ຍຸຕິທຳ ທັງເປັນປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ເພດຍິງ, ມີການເຂົ້າຮ່ວມ ແລະ ໂອ້ລົມຂອງທ່ານ ນາງ ສູນທອນ ໄຊຍະຈັກ ຮັກສາການແທນປະທານສະພາແຫ່ງຊາດ, ມີບັນດາທ່ານຮອງປະທານຄະນະ ສສຊ ເພດຍິງ, ສສຊ ເພດຍິງ ຈຳນວນໜຶ່ງ ທີ່ປະຈຳການຢູ່

ອ່ານຕໍ່ໜ້າ 4



ແນວຄິດປະທານ
## ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ສ້າງເງື່ອນໄຂທຸກຢ່າງໃຫ້ແມ່ຍິງ, ເປັນຕົ້ນແມ່ນແມ່ຍິງຜູ້ອອກແຮງງານບັນດາເຜົ່າ ໄດ້ເຂົ້າຮ່ວມໃນທຸກການເຄື່ອນໄຫວ ແລະ ໃນຊີວິດຂອງສັງຄົມ, ໂດຍສະເພາະແມ່ນເອົາໃຈໃສ່ຊ່ວຍເຫຼືອແມ່ຍິງໃຫ້ໄດ້ຮ່ຳຮຽນ, ຍົກລະດັບຄວາມຮູ້ຄວາມສາມາດໃຫ້ສູງຂຶ້ນໃນທຸກດ້ານ.

(ນິພົນເລືອກເຟັ້ນ ເຫຼັ້ມ 1, ໜ້າ 140)

ອ່ານຕໍ່ສະບັບໜ້າ




## ກະຊວງປ້ອງກັນປະເທດ ປາຖະກະຖາວັນລັດຖະທຳມະນູນ



(ສພຊ) - ວັນທີ 19 ສິງຫານີ້, ກະຊວງປ້ອງກັນປະເທດ ໄດ້ຈັດປາຖະກະຖາວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 35 ປີ (15 ສິງຫາ 1991-15 ສິງຫາ 2026) ໂດຍການເປັນປະທານ ແລະ ປາຖະກະຖາ

ອ່ານຕໍ່ໜ້າ 4

## ສຳມະນາກົນໄກປະສານງານ ແລະ ຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳ




ອ່ານຕໍ່ໜ້າ 8

## ປະກາດແຕ່ງຕັ້ງບຸກຄະລາກອນ ປະຈຳ 2 ເຂດເລືອກຕັ້ງພາກເໜືອ



(ສພຊ)-ວັນທີ 19-20 ສິງຫາ 2026 ໄດ້ມີພິທີປະກາດກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ແລະ ການແຕ່ງຕັ້ງບຸກຄະລາກອນປະຈຳເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ ແລະ ເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ໂດຍການເປັນປະທານຂອງທ່ານ ມອນໄຊ ລາວມົວຊື່ງ ກຳມະການສູນກາງພັກ, ຮອງປະທານຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ); ເຂົ້າຮ່ວມມີບັນດາທ່ານປະທານ-ຮອງປະທານສະພາປະຊາຊົນແຂວງ (ສພຂ); ຄະນະປະຈຳ ແລະ ກຳມະການພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ພະແນກການອ້ອມຂ້າງ, ຄະນະຫ້ອງວ່າການ ແລະ ພະນັກງານເສນາທິການຂອງ ສພຂ 2 ແຂວງດັ່ງກ່າວ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ບັນດາທ່ານເລຂາພັກແຂວງ ໄດ້ລາຍງານສະພາບການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ (ຄສຊ) ປະຈຳເຂດເລືອກຕັ້ງ; ຫຼັງຈາກນັ້ນ, ທ່ານ

ອ່ານຕໍ່ໜ້າ 7

ເພີ່ມທະວີການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍໃຫ້ມີຄວາມສັກສິດ

# ປັບປຸງກົດໝາຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ



(ສພຊ) - ວັນທີ 21 ສິງຫາ 2026, ກະຊວງຍຸຕິທຳ ແລະ ກະຊວງປ້ອງກັນຄວາມສະຫງົບ (ປກສ) ໄດ້ຈັດກອງປະຊຸມປັງປຸງກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນບາງພາກ, ບາງໝວດ ແລະ ບາງມາດຕາ ທີ່ຍັງບໍ່ທັນຈະແຈ້ງ, ຣັດກຸມ, ຄົບຖ້ວນ ໂດຍການເປັນປະທານຮ່ວມຂອງ ພົຕ. ຄອນສະຫວັນ ສິມພາໄຊ ຮອງລັດຖະມົນຕີກະຊວງປ້ອງກັນປ້ອງຄວາມສະຫງົບ ແລະ ທ່ານ ນາງ ສີສຸດາ ໂສພາວັນດີ ຮອງລັດຖະມົນຕີກະຊວງຍຸຕິທຳ, ມີບັນດາພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ພັອ. ວິໄລຄຳ ສີຊານົນ ຫົວໜ້າກົມນິຕິກຳ ແລະ ກົດໝາຍ, ຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບ ໄດ້ລາຍງານກ່ຽວກັບເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ໂດຍປະຕິບັດຕາມຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະບັບເລກທີ 14/ຄປຈ, ລົງວັນທີ 10 ພຶດສະພາ 2023; ສະນັ້ນ, ກະຊວງ ປກສ ຈຶ່ງໄດ້ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ສະບັບປີ 2017 ໃນຂອບເຂດທົ່ວກຳລັງ ປກສ ເຫັນວ່າຫຼາຍກົມກອງໄດ້ມີຄຳເຫັນໃຫ້ມີການປັບປຸງບາງພາກ, ບາງໝວດ, ບາງມາດຕາ ທີ່ມີຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດ ແລະ ກຳນົດຕື່ມບາງບັນຫາທີ່ຍັງບໍ່ໄດ້ກຳນົດໄວ້ໃນກົດໝາຍສະບັບດັ່ງກ່າວ.

ໂດຍປະຕິບັດຕາມແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ (2026-2030) ຂອງສະພາແຫ່ງຊາດ, ຂໍ້ຕົກລົງວ່າດ້ວຍການຮັບຮອງເອົາແຜນການສ້າງ ແລະ ປັບປຸງກົດໝາຍຂອງກະຊວງປ້ອງກັນຄວາມສະຫງົບ (ປີ 2026-2030) ສະບັບເລກທີ 375/ປກສ; ຄະນະຮັບຜິດຊອບໄດ້ດຳເນີນການຄົ້ນຄວ້າ, ປັບປຸງຫຼາຍຫຼືບຫຼາຍຕ່າວ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສ້າງນິຕິກຳ ເຊິ່ງໄດ້ມີການປະເມີນຜົນ, ທາບທາມຄຳເຫັນ ທັງຢູ່ສູນກາງ, ທ້ອງຖິ່ນ ແລະ ໄດ້ສະເໜີຜ່ານຄະນະປະຈຳພັກກະຊວງ ປກສ ເພື່ອມີຄຳເຫັນ ແລະ ໄດ້ຜ່ານກອງປະຊຸມກວດກາຄວາມສອດຄ່ອງທາງດ້ານກົດໝາຍຂັ້ນວິຊາການ ໃນຄັ້ງວັນທີ 11-12 ສິງຫາ 2026 ຮ່ວມກັບກະຊວງຍຸຕິທຳ ສຳເລັດໂດຍພື້ນຖານ.

**ຄັດ ແລະ ຮຽບຮຽງຈາກ**
**ເພຈ: ຄວາມສະຫງົບ**
**Lao Security News**

# ກອງປະຊຸມໃຫຍ່ສະຫະພັນລັດຖະສະພາສຸຂະພາບໂລກໃນພາກພື້ນອາຊີ-ປາຊີຟິກ

(ສພຊ) - ລະຫວ່າງວັນທີ 11-13 ສິງຫາ 2026, ຄະນະຜູ້ແທນລາວນຳໂດຍທ່ານ ດຣ. ໄພວັນ ແກ້ວປະເສີດ ສະມາຊິກສະພາແຫ່ງຊາດ, ຮອງລັດຖະມົນຕີກະຊວງສາທາລະນະສຸກ ໄດ້ເຂົ້າຮ່ວມກອງປະຊຸມໃຫຍ່ສະຫະພັນລັດຖະສະພາສຸຂະພາບໂລກໃນພາກພື້ນອາຊີ-ປາຊີຟິກ (APPE-GH) ຄັ້ງທີ 9 ທີ່ນະຄອນຫຼວງພະນົມເປັນ, ປະເທດກຳປູເຈຍ; ກອງປະຊຸມໄດ້ຮັບກຽດກ່າວເປີດໂດຍທ່ານ ອຸສ ບໍຣິດ ຮອງປະທານສະພາສູງ ແຫ່ງລາຊະອານາຈັກກຳປູເຈຍຜູ້ທີ 1, ກ່າວປິດໂດຍທ່ານ ກິດຕິເສດທາບິນດິດ ຈິມຢຽບ ຮອງປະທານສະພາແຫ່ງຊາດ ແຫ່ງລາຊະອານາຈັກກຳປູເຈຍ ຜູ້ທີ 1 ແລະ ເປັນປະທານກອງປະຊຸມໂດຍທ່ານ ນາງ ລັອກ ເຄັງ ປະທານຄະນະກຳມະການສຸຂະພາບ, ສັງຄົມສົງເຄາະ, ນັກຮົບເກົ່າ, ການຟື້ນຟູໜ້າທີ່ການ, ເຍົາວະຊົນ, ແຮງງານ, ການຝຶກວິຊາຊີບ ແລະ ແມ່ຍິງ.




ກອງປະຊຸມໃນຄັ້ງນີ້ໄດ້ປຶກສາຫາລື ແລະ ພິຈາລະນາຫຼາຍບັນຫາ ເປັນຕົ້ນ: ການຍົກລະດັບການປະກັນສຸຂະພາບທົ່ວປວງຊົນ ໃນພາກພື້ນອາຊີ-ປາຊີຟິກ; ການຄຸ້ມຄອງຂອງລັດຖະສະພາ ຕໍ່ການປະກັນສຸຂະພາບທົ່ວປວງຊົນ: ຄວາມຄືບໜ້າ ແລະ ສິ່ງທ້າທາຍ; ການປະກັນສຸຂະພາບທົ່ວປວງຊົນໃນໄລຍະການປ່ຽນແປງຂອງສະພາບດິນຟ້າອາກາດ; ການປະກັນສຸຂະພາບທົ່ວປວງຊົນໃນຍຸກປັນຍາປະດິດ(AI); ການຮ່ວມມືທາງດ້ານສະພາບອາກາດ, ສຸຂະພາບ ແລະ ປັນຍາປະດິດ ໃນລັດຖະສະພາພາກພື້ນອາຊີ-ປາຊີຟິກ; ການທັດສະນະສຶກສາໂຮງໝໍ ແລະ ສຸກສາລາຕົວແບບຂອງກຳປູເຈຍ ຢູ່ແຂວງກຳປົດ.

ທ່ານ ດຣ. ໄພວັນ ແກ້ວປະເສີດ ໄດ້ສະເໜີບົດໃນພາກສົນທະນາ ກ່ຽວກັບການປະກັນສຸຂະພາບທົ່ວປວງຊົນໃນຍຸກປັນຍາປະດິດ ຂອງ ສປປລາວ ເຊິ່ງ AI ເປັນທ່າແຮງໃນການສະໜັບສະໜູນດ້ານສຸຂະພາບ ໂດຍການປັບປຸງການບົ່ງມະຕິພະຍາດ, ເສີມສ້າງການເຝົ້າລະວັງພະຍາດ ແລະ ຊ່ວຍໃນການນຳໃຊ້ຂໍ້ມູນດ້ານສຸຂະພາບໃຫ້ດີຂຶ້ນ ເພື່ອປັບປຸງການບໍລິການ ແລະ ກ້າວໄປສູ່ການຄຸ້ມຄອງສຸຂະພາບທົ່ວປວງຊົນ. ສປປລາວ ຍັງຢູ່ໃນຂັ້ນຕົ້ນໃນການວາງພື້ນຖານການນຳໃຊ້ AI ດ້ວຍການສະໜັບສະໜູນຈາກອົງການອະນາໄມໂລກ; ກະຊວງສາທາລະນະສຸກ ໄດ້ຈັດກອງປະຊຸມປຶກສາຫາລືດ້ານນະໂຍບາຍລະດັບສູງ ແລະກອງປະຊຸມວິຊາການກ່ຽວກັບ AI ດ້ານສາທາລະນະສຸກ ຄັ້ງທຳອິດຂອງປະເທດ ເພື່ອກຳນົດກໍລະນີການນຳໃຊ້ບຸລິມະສິດ ແລະ ເສີມສ້າງຄວາມພ້ອມແຫ່ງຊາດ ໃນການນຳໃຊ້ AI ເຂົ້າໃນການຊ່ວຍເຫຼືອດ້ານການບົ່ງມະຕິການປິ່ນປົວສຸຂະພາບຂັ້ນຕົ້ນ ໂດຍສະເພາະພະຍາດຄວາມດັນເລືອດສູງ ແລະ ພະຍາດເບົາຫວານ ພາຍໃຕ້ໂຄງການ Lao PEN, ການກວດວັນນະໂລກໂດຍໃຊ້ X-rays ຜົ້ງເອິກ ແລະ ການຊອກຫາພະຍາດໂດຍໃຊ້ຂໍ້ມູນສະພາບອາກາດ ແລະ ສຸຂະພາບ ເຊິ່ງເຕັກໂນໂລຊີເຫຼົ່ານີ້ ຈະຊ່ວຍສະໜັບສະໜູນແພດໝໍ ແຕ່ບໍ່ແມ່ນການທົດແທນການປະຕິບັດໜ້າທີ່ຂອງເຂົາເຈົ້າ. ສະມາຊິກລັດຖະສະພາ ມີຄວາມຮັບຜິດຊອບທີ່ສຳຄັນໃນການປະຕິບັດພາລະບົດບາດຂອງຕົນ ໃນການຊຸກຍູ້ການປະດິດສ້າງທີ່ຮັບປະກັນວ່າເຕັກໂນໂລຊີໃໝ່ສອດຄ່ອງກັບບຸລິມະສິດດ້ານສຸຂະພາບແຫ່ງຊາດ ແລະ ຮັບໃຊ້ຜົນປະໂຫຍດຂອງປະຊາຊົນ ໃນການຄຸ້ມຄອງສຸຂະພາບທົ່ວປວງຊົນ ເພື່ອຮັບປະກັນວ່ານະວັດຕະກຳສາມາດນຳໄປສູ່ການແກ້ໄຂດ້ານການບໍລິການສຸຂະພາບ ແລະ ການລົງທຶນໃນສຸຂະພາບດິຈິຕອນທີ່ເປັນປະໂຫຍດຕໍ່ທຸກຄົນ ໂດຍສະເພາະຜູ້ຢູ່ໃນຊຸມຊົນຫ່າງໄກທີ່ບໍ່ສາມາດເຂົ້າເຖິງການບໍລິການໄດ້.

# PTL Holding ມອບເຄື່ອງບໍລິໂພກໃຫ້ ຫສຊ ນຳໄປຊ່ວຍເຫຼືອປະຊາຊົນຜູ້ທຸກຍາກຢູ່ເຊກອງ




(ສພຊ) - ວັນທີ 20 ສິງຫາ2026ທີ່ສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບເຄື່ອງບໍລິໂພກ ລວມມູນຄ່າ 140 ລ້ານກີບ ຈາກບໍລິສັດ ພີທີແອລ ໂຮນດິງ ຈຳກັດ ເພື່ອນຳໄປຊ່ວຍເຫຼືອປະຊາຊົນຜູ້ທຸກຍາກຢູ່ແຂວງເຊກອງ; ກ່າວມອບໂດຍທ່ານພັນປະກິດອ່ອນພັນດາລາ ຕາງໜ້າບໍລິສັດ ພີທີແອລ ໂຮນດິງ ຈຳກັດ, ຕາງໜ້າຮັບໂດຍທ່ານ ຕູ້ຊົ່ງ ບົວສີຕັ່ງສີ ຫົວໜ້າກົມວຽກງານສະມາຊິກສະພາແຫ່ງຊາດ ເຊິ່ງມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

ເຄື່ອງບໍລິໂພກດັ່ງກ່າວ ຈະໄດ້ຖືກນຳສົ່ງໄປເຖິງມືປະຊາຊົນຜູ້ທີ່ກຳລັງປະສົບຄວາມຫຍຸ້ງຍາກ ແລະຕ້ອງການຄວາມຊ່ວຍເຫຼືອຢູ່ແຂວງເຊກອງ ໃຫ້ທັນການ; ໃນໂອກາດນີ້, ຕາງໜ້າ ຫສຊ ໄດ້ສະແດງຄວາມຂອບໃຈ ແລະ ຍ້ອງຍໍຊົມເຊີຍຕໍ່ບໍລິສັດດັ່ງກ່າວທີ່ມີນ້ຳໃຈໂອບອ້ອມອາລີ ແລະມີຄວາມຮັບຜິດຊອບຕໍ່ສັງຄົມ ໃນການເຄື່ອນໄຫວຊ່ວຍເຫຼືອພີ່ນ້ອງປະຊາຊົນຮ່ວມກັບພາກລັດ.

# ຊາວໜຸ່ມ ຈະກາຍເປັນຜູ້ຂັບເຄື່ອນ ສ້າງໃຫ້ອາຊຽນເຂັ້ມແຂງຂຶ້ນ




(ສພຊ) - ທ່ານ ໄຊປັນຍາ ພົມວິຫານ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ, ປະຈຳການກຳມາທິການການຕ່າງປະເທດ ໄດ້ໃຫ້ສຳພາດຕໍ່ລາຍການ AIPACAST ເຊິ່ງເປັນສື່ສັງຄົມອອນລາຍຂອງສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ພາຍຫຼັງສຳເລັດການເຂົ້າຮ່ວມກອງປະຊຸມປຶກສາຫາລືຂອງສະມາຊິກລັດຖະສະພາໜຸ່ມໄອປາ (YPA) ຄັ້ງທີ 3 ໃນຮູບແບບທາງໄກ.

ທ່ານໄດ້ຍົກໃຫ້ເຫັນເຖິງຄວາມສຳຄັນໃນການຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊາວໜຸ່ມ ແລະເຍົາວະຊົນລາວ ໄລຍະປີ 2021-2030 ທີ່ເປັນການເສີມສ້າງສັກກະຍະພາບຂອງຊາວໜຸ່ມ ຜ່ານການສຶກສາ, ການພັດທະນາທັກສະ ແລະ ການມີສ່ວນຮ່ວມ ໂດຍສະເພາະແມ່ນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ໃນຕົ້ນປີນີ້ ເຫັນວ່າມີຈຳນວນ ສສຊ ແລະ ສສຂ ໜຸ່ມເພີ່ມຂຶ້ນ ອັນໄດ້ສະທ້ອນໃຫ້ເຫັນເຖິງຄວາມມຸ່ງໝັ້ນ ແລະ ຄວາມພະຍາຍາມເຮັດໃຫ້ຊາວໜຸ່ມໄດ້ມີສ່ວນຮ່ວມຫຼາຍຂຶ້ນໃນການເປັນຕົວແທນ ແລະ ການກຳນົດນະໂຍບາຍ; ທ່ານເຊື່ອໝັ້ນວ່າ ການລົງທຶນໃສ່ຊາວໜຸ່ມ ເປັນການລົງທຶນເພື່ອອະນາຄົດ, ເນື່ອງຈາກຊາວໜຸ່ມບໍ່ແມ່ນພຽງຜູ້ຮັບຟັງ ແຕ່ພວກເຂົາມີບົດບາດໃນການເປັນຜູ້ນຳພາ, ຊາວໜຸ່ມຈະກາຍເປັນຜູ້ຂັບເຄື່ອນທີ່ສ້າງໃຫ້ອາຊຽນເຂັ້ມແຂງຂຶ້ນສຳລັບອະນາຄົດ.

# ຜ່ານບັນດາເອກະສານຂອງ ສພຂ ບໍ່ແກ້ວ

(ສພຂ) - ວັນທີ 15 ກໍລະກົດຜ່ານມາ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ), ໄດ້ມີກອງປະຊຸມວຽກງານຮອບດ້ານ 6 ເດືອນຕົ້ນປີ ແລະ ວາງທິດທາງແຜນການ 6 ເດືອນທ້າຍປີ 2026 ຂອງຄະນະປະຈຳສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ດາລີວັນ ພູສະຫວັນ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີຄະນະປະຈຳສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການ, ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານ-ລັດຖະກອນເຂົ້າຮ່ວມ.



ຈຸດປະສົງເພື່ອຜ່ານຮ່າງແຜນດຳເນີນງານຂອງຄະນະປະຈຳສະພາປະຊາຊົນແຂວງ ໄລຍະ 5 ປີ (2026-2030), ຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີແລະແຜນການເຄື່ອນໄຫວວຽກງານ 6 ເດືອນທ້າຍປີ 2026 ຂອງຄະນະປະຈຳ ສພຂ, ຮ່າງມະຕິ 7 ສະບັບ ຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວວຽກງານພາຍໃນ ສພຂ ໂດຍຫຍໍ້, ຜ່ານຮ່າງບົດລາຍງານຜົນສຳເລັດການລົງຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດຊຸດທີ X ແລະ ສພຂ ຊຸດທີ V; ຈາກນັ້ນ, ໄດ້ມີການປະກອບຄຳຄິດຄຳເຫັນໃສ່ແຕ່ລະເນື້ອໃນຢ່າງກົງໄປກົງມາ.



# ສພຂ ຄຳມ່ວນ ຕິດຕາມສະພາບໄພນ້ຳຖ້ວມ ແລະ ມອບເຄື່ອງຊ່ວຍເຫຼືອຜູ້ປະສົບໄພ



(ສພຂ) -ໃນວັນທີ 15 ກໍລະກົດຜ່ານມາ, ທ່ານ ປອ. ແກ້ວອຸດອນ ບຸດສິງຂອນ ກຳມະການປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມສະພາບໄພນ້ຳຖ້ວມ ແລະ ມອບເຄື່ອງຊ່ວຍເຫຼືອໃຫ້ແກ່ປະຊາຊົນຜູ້ປະສົບໄພ ຢູ່ເມືອງນາກາຍ; ໃນການເຄື່ອນໄຫວຄັ້ງນີ້ ໄດ້ສົມທົບກັບທ່ານ ນາງ ບົວກາ ແກ້ວມະນີ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ ພ້ອມດ້ວຍອຳນາດການປົກຄອງເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ອີງຕາມການລາຍງານຂອງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງນາກາຍ ໃຫ້ຮູ້ວ່າ: ໄພນ້ຳຖ້ວມຄັ້ງນີ້ ໄດ້ສົ່ງຜົນກະທົບໂດຍກົງຕໍ່ເຂດນາຕານ ເຊິ່ງກວມເອົາ 4 ບ້ານຄື: ບ້ານນາຕານ, ນາຫ້າງ, ທ່າຂັນແກ້ວແລະບ້ານຜາດ່າງ. ຜົນເສຍຫາຍເບື້ອງຕົ້ນ ມີຄອບຄົວທີ່ໄດ້ຮັບຜົນກະທົບທັງໝົດ 328 ຄອບຄົວ, ມີພົນລະເມືອງ 1,329 ຄົນ, ຍິງ 654 ຄົນ ແລະ ເຮືອນພັກອາໄສຖືກນ້ຳຖ້ວມ 227 ຫຼັງຄາເຮືອນ. ຕໍ່ກັບສະພາບການດັ່ງກ່າວ, ອຳນາດການປົກຄອງແຂວງ ແລະ ເມືອງ ໄດ້ເລັ່ງກອບກູ້ ແລະ ຍົກຍ້າຍປະຊາຊົນ ພ້ອມດ້ວຍສັດລ້ຽງ ໄປຍັງສະຖານທີ່ປອດໄພຢ່າງຮີບດ່ວນ.

ທ່ານ ປອ. ແກ້ວອຸດອນ ບຸດສິງຂອນ ໄດ້ມີຄຳເຫັນໂອ້ລົມ ແລະ ຊີ້ນຳໃຫ້ອຳນາດການປົກຄອງເມືອງ ເພີ່ມທະວີການຕິດຕາມກວດກາສະພາບຕົວຈິງຢ່າງໃກ້ຊິດ. ພ້ອມທັງເນັ້ນໜັກໃຫ້ເອົາໃຈໃສ່ສະໜອງຄວາມຕ້ອງການອັນຈຳເປັນເປັນຕົ້ນແມ່ນແນວພັນພືດ ແລະ ແນວພັນເຂົ້າ ເພື່ອຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ. ນອກຈາກນີ້, ທ່ານຍັງໄດ້ລົງຕິດຕາມການບໍລິການດ້ານສາທາລະນະສຸກທີ່ສຸກສາລາເຂດບ້ານນາຕານ ເພື່ອຮັບປະກັນການຮອງຮັບຜູ້ປ່ວຍ, ພ້ອມທັງກວດກາສະຖານທີ່ປະຈຳການຂອງຫ້ອງການຕາແສງເຂດບ້ານນາຕານ (ຕັ້ງຢູ່ບ້ານກວນ) ເພື່ອຊອກຫາທິດທາງປັບປຸງສະຖານທີ່ເຮັດວຽກໃຫ້ມີຄວາມສະດວກສະບາຍຂຶ້ນໃນຕໍ່ໜ້າ. ໃນໂອກາດນີ້, ທ່ານຍັງໄດ້ຕາງໜ້າຄະນະນຳ ສພຂ ມອບເຄື່ອງອຸປະໂພກ-ບໍລິໂພກ ແລະ ເງິນສົດຈຳນວນ 50 ລ້ານກີບ ໃຫ້ແກ່ອຳນາດການປົກຄອງເມືອງນາກາຍເພື່ອນຳໃຊ້ເຂົ້າໃນການແກ້ໄຂສະພາບສຸກເສີນ ແລະ ໄດ້ສືບຕໍ່ລົງມອບເຄື່ອງຊ່ວຍເຫຼືອໂດຍກົງໃຫ້ແກ່ປະຊາຊົນຢູ່ບ້ານນາຕານຕື່ມອີກ.





## ເຝິກອົບຮົມ..

(ຕໍ່ຈາກໜ້າ 1)

ສູນກາງ ແລະ 18 ເຂດເລືອກຕັ້ງ, ກອງເລຂາຊ່ວຍວຽກ, ຜູ້ຕາງໜ້າອົງການຈັດຕັ້ງສາກົນ ແລະ ຊ່ຽວຊານຂອງ UNDP ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ.

ໃນພິທີເປີດກອງປະຊຸມ, ທ່ານ ນາງ ທຸມມາລີ ວົງພະຈັນ ໄດ້ເນັ້ນໜັກວ່າ: ການເຝິກອົບຮົມຄັ້ງນີ້ ເປັນໂອກາດດີທີ່ສະມາຊິກສະພາແຫ່ງຊາດເພດຍິງ ຈະໄດ້ຮັບຮູ້ເຂົ້າໃຈກ່ຽວກັບການເຊື່ອມທັດສະນະບົດບາດຍິງ-ຊາຍ ເຂົ້າໃນການຕິດຕາມກວດກາແລະທົບທວນກົດໝາຍ, ການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ (IT) ແລະ ປັນຍາປະດິດ (AI) ເປັນເຄື່ອງມືໃນການທົບທວນ, ວິເຄາະກົດໝາຍ ເພື່ອໝູນໃຊ້ເຂົ້າໃນການສ້າງ, ປັບປຸງກົດໝາຍ ແລະ ການຕິດຕາມກວດກາຂອງສະພາ; ການວິເຄາະບົດບາດຍິງ-ຊາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ການຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X ຂອງ ສປປລາວ ໃຫ້ເປັນລະບົບ ແລະ ເລິກເຊິ່ງກວ່າເກົ່າ ເພື່ອຍົກລະດັບຄວາມຮູ້ຄວາມສາມາດ ເຂົ້າໃນການປະຕິບັດໜ້າທີ່ຂອງຕົນໃຫ້ມີປະສິດທິພາບ ແລະ ປະສິດທິຜົນຍິ່ງຂຶ້ນ, ສ້າງຄວາມໝັ້ນໃຈໃຫ້ແກ່ຕົນເອງຫຼາຍຂຶ້ນ ໃນການປະກອບຄຳເຫັນຢູ່ໃນກອງປະຊຸມສະພາແຕ່ລະຄັ້ງ, ສາມາດນຳເອົາບົດຮຽນຈາກການເຝິກອົບຮົມຄັ້ງນີ້ ໄປໝູນໃຊ້ເຂົ້າໃນການພິຈາລະນາຫົວຂໍ້ຕ່າງໆ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ ແນໃສ່ເຮັດໃຫ້ການເປັນຕົວແທນຂອງເພດຍິງໃນເວທີການເມືອງເວົ້າລວມ, ເວົ້າສະເພາະ ການເຮັດໜ້າທີ່ສະມາຊິກສະພາເປັນຕົວແທນໃຫ້ແກ່ປະຊາຊົນ ໄດ້ຢ່າງຄົບຖ້ວນ ແລະ ສົມບູນ.

ກອງປະຊຸມໄດ້ຮັບຟັງການສະເໜີບົດຮຽນຈາກຄູເຝິກແລະຊ່ຽວຊານຕ່າງປະເທດ ກ່ຽວກັບການດຳເນີນງານຂອງລັດຖະສະພາສາກົນ, ການສົມທຽບປະສົບການ ແລະ ບົດຮຽນຈາກສະມາຊິກລັດຖະສະພາເພດຍິງ, ການນຳໃຊ້ AI ເຂົ້າໃນວຽກງານລັດຖະສະພາ, ການວິເຄາະແຜນພັດທະນາເສດຖະກິດ-ສັງຄົມ, ການທົບທວນກົດໝາຍທີ່ຄຳນຶງເຖິງບົດບາດຍິງ-ຊາຍໃນຕົວຈິງ; ພ້ອມກັນນັ້ນ, ຍັງໄດ້ຈັດກິດຈະກຳເປັນກຸ່ມ ແລະ ແລກປ່ຽນຄຳເຫັນລະຫວ່າງຜູ້ເຂົ້າຮ່ວມ, ນຳສະເໜີຕົວຢ່າງການປະຕິບັດວຽກງານຕົວຈິງ, ວິທີການນຳໃຊ້ເຄື່ອງມືເອໄອ.

ໃນໂອກາດເຂົ້າຮ່ວມກອງປະຊຸມ, ທ່ານ ນາງ ສູນທອນ ໄຊຍະຈັກຮັກສາ ການແທນປະທານສະພາແຫ່ງຊາດ ໄດ້ມີບາງຄຳເຫັນເນັ້ນຕື່ມກ່ຽວກັບຄວາມສຳຄັນໃນການຍົກສູງບົດບາດຂອງແມ່ຍິງ ໃນການກຳນົດນະໂຍບາຍ, ກົດໝາຍແລະນິຕິກຳຕ່າງໆ ແນໃສ່ເຮັດໃຫ້ສິດ ແລະ ຜົນປະໂຫຍດຂອງແມ່ຍິງແລະເດັກນ້ອຍໄດ້ຮັບການປົກປ້ອງ ແລະ ສອດຫ້ອຍເຂົ້າໃນນະໂຍບາຍ ແລະ ນິຕິກຳ; ຊຸກຍູ້ໃຫ້ແມ່ຍິງໄດ້ຮັບການສົ່ງເສີມ ແລະ ຍົກລະດັບດ້ານຄວາມຮູ້ຄວາມສາມາດເຊັ່ນ ຄວາມຮູ້ດ້ານກົດໝາຍ, ວຽກງານໄອທີ, ທັກສະດ້ານຕ່າງໆ ເພື່ອສ້າງເງື່ອນໄຂໃຫ້ແມ່ຍິງມີສ່ວນຮ່ວມຢ່າງເທົ່າທຽມ ແນໃສ່ເຮັດໃຫ້ການເຊື່ອມສານທັດສະນະຍິງ-ຊາຍ ເຂົ້າໃສ່ເນື້ອໃນທີ່ນຳໄປພິຈາລະນາຢູ່ສະພາ; ແມ່ຍິງຕ້ອງເອົາໃຈໃສ່ບຸກບືນພັດທະນາຕົນເອງຢ່າງຮອບດ້ານ ໃນເງື່ອນໄຂທີ່ມີການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ເຊິ່ງຕ້ອງໄດ້ຍົກລະດັບຄວາມຮູ້ພາສາຕ່າງປະເທດ, ກົດໝາຍສາກົນ, ໄອທີ ແລະ ເອໄອ ເພື່ອສ້າງຄວາມໝັ້ນໃຈ, ຄວາມກ້າຫານ ໃນການຄົ້ນຄວ້າປະກອບຄຳເຫັນ, ແລກປ່ຽນບົດຮຽນ ບໍ່ພຽງແຕ່ຢູ່ສະພາແຫ່ງຊາດລາວ ແຕ່ຍັງລວມທັງການແລກປ່ຽນບົດຮຽນ ແລະ ປະສົບການທີ່ດີກັບລັດຖະສະພາໃນພາກພື້ນ ແລະ ສາກົນໃຫ້ຫຼາຍຂຶ້ນ; ເອົາໃຈໃສ່ເຊື່ອມທັດສະນະບົດບາດຍິງ-ຊາຍ ເຂົ້າໃນທຸກຂົງເຂດວຽກງານຕາມຂອບເຂດຄວາມຮັບຜິດຊອບຂອງຕົນເພື່ອສ້າງເງື່ອນໄຂໃຫ້ແມ່ຍິງມີໂອກາດເຂົ້າຮ່ວມໃນວຽກງານຕ່າງໆຂອງສູນກາງແລະທ້ອງຖິ່ນ.

ໃນວາລະກອງປະຊຸມ, ຍັງໄດ້ຈັດພິທີມອບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດ ແລະ ໃບກຽດຕິຄຸນຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງ ໃຫ້ທ່ານ ນາງ ມາຕິນ ເທີເລີ ຜູ້ຕາງໜ້າອົງການ UNDP ທີ່ໄດ້ມີການປະກອບສ່ວນຢ່າງຫຼວງຫຼາຍໃນການປະຕິບັດໜ້າທີ່ຂອງຕົນຢູ່ ສປປລາວ ຕະຫຼອດໄລຍະ 3 ປີ ແລະ ເນື່ອງໃນໂອກາດໝົດວາລະໜ້າທີ່ຢູ່ ສປປລາວ.

**(ສອນສັກ ວັນວິໄຊ)**

## ກະຊວງ...

(ຕໍ່ຈາກໜ້າ 1)

ຂອງທ່ານ ກອງແກ້ວ ໄຊສິງຄາມ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ເຊິ່ງມີ ພົທ. ວົງສອນ ອິນປານພົມ ເລຂາທິການສູນກາງພັກ, ຮອງລັດຖະມົນຕີກະຊວງປ້ອງກັນປະເທດ, ຫົວໜ້າກົມໃຫຍ່ການເມືອງກອງທັບ; ຄະນະນຳກະຊວງປ້ອງກັນປະເທດ, 4 ກົມໃຫຍ່, ຫ້ອງວ່າການກະຊວງປ້ອງກັນປະເທດ; ຕາງໜ້າຄະນະພັກ-ຄະນະບັນຊາ, ອົງການ, ກອງບັນຊາການ, ວິທະຍາຄານ, ກົມກອງ, ໂຮງຮຽນ, ໂຮງໝໍ ພ້ອມດ້ວຍນາຍ ແລະ ພົນທະຫານ ອ້ອມຂ້າງສຳນັກງານກະຊວງປ້ອງກັນປະເທດ ເຂົ້າຮ່ວມ.

ທ່ານ ກອງແກ້ວ ໄຊສິງຄາມ ໄດ້ຍົກໃຫ້ເຫັນຄວາມໝາຍ ແລະ ຄວາມສຳຄັນຂອງວັນລັດຖະທຳມະນູນແຫ່ງຊາດ ພ້ອມທັງທົບທວນຄືນຂະບວນການສ້າງ, ປັບປຸງ ແລະ ພັດທະນາລັດຖະທຳມະນູນ ຕະຫຼອດໄລຍະ 35 ປີ ຜ່ານມາ ເຊິ່ງລັດຖະທຳມະນູນແມ່ນກົດໝາຍພື້ນຖານຂອງຊາດ ແລະ ເປັນຫຼັກການສຳຄັນທີ່ກຳນົດຮູບແບບລະບົບການເມືອງ, ໂຄງສ້າງອຳນາດລັດ, ສິດ ແລະ ໜ້າທີ່ຂອງພົນລະເມືອງ ພ້ອມທັງກຳນົດຫຼັກການພື້ນຖານສຳລັບການພັດທະນາປະເທດ; ລັດຖະທຳມະນູນ ຍັງເປັນພື້ນຖານໃຫ້ກົດໝາຍອື່ນໆ ແລະ ການດຳເນີນງານຂອງອົງການລັດ ຕ້ອງສອດຄ່ອງ ແລະ ບໍ່ຂັດກັບລັດຖະທຳມະນູນ.

ພາຍຫຼັງປະເທດໄດ້ຮັບການສະຖາປະນາ, ພັກ ແລະ ລັດ ໄດ້ວາງພາລະກິດຍຸດທະສາດສອງດ້ານຄື: ການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດ; ຕໍ່ມາ, ຫຼັງຈາກກຳນົດແນວທາງປ່ຽນແປງໃໝ່ຮອບດ້ານ, ສະພາບການພັດທະນາຂອງປະເທດ ໄດ້ຮຽກຮ້ອງໃຫ້ມີການຈັດວາງຫຼັກການທາງກົດໝາຍໃຫ້ຊັດເຈນ, ເປັນເອກະພາບ ແລະ ເໝາະສົມກັບພາລະກິດໃໝ່ຂອງຊາດ. ດ້ວຍເຫດນັ້ນ, ກອງປະຊຸມເທື່ອທີ 6 ຂອງສະພາປະຊາຊົນສູງສຸດ ຊຸດທີ II ໃນປີ 1991 ຈຶ່ງໄດ້ພິຈາລະນາ ແລະ ຮັບຮອງເອົາລັດຖະທຳມະນູນສະບັບທຳອິດຂອງ ສປປ ລາວ ແລະ ປະທານປະເທດປະກາດໃຊ້ໃນວັນທີ 15 ສິງຫາ 1991, ການປະກາດໃຊ້ລັດຖະທຳມະນູນໃນວັນດັ່ງກ່າວ ຈຶ່ງຖືເປັນຄວາມໝາຍສຳຄັນຂອງການຫັນແນວ ທາງການປົກຄອງ ແລະ ການພັດທະນາປະເທດ ໃຫ້ດຳເນີນໄປຕາມລະບົບລັດຖະທຳມະນູນ ແລະ ກົດໝາຍ. ນັບແຕ່ປະກາດໃຊ້ເປັນຕົ້ນມາ, ລັດຖະທຳມະນູນໄດ້ຮັບການປັບປຸງໃຫ້ເໝາະສົມກັບແຕ່ລະໄລຍະຂອງການພັດທະນາ ໂດຍມີສະບັບປັບປຸງໃນປີ2003, 2015 ແລະ 2025; ການປັບປຸງແຕ່ລະຄັ້ງ ມີຈຸດປະສົງເພື່ອສືບຕໍ່ພັດທະນາຂອບກົດໝາຍ, ປັບປຸງກົນໄກການບໍລິຫານລັດ ແລະ ຮັບໃຊ້ພາລະກິດການສ້າງສາປະເທດໃນແຕ່ລະໄລຍະ.



ສຳລັບກະຊວງປ້ອງກັນປະເທດ, ການຮ່ຳຮຽນ ແລະ ເຄົາລົບລັດຖະທຳມະນູນ ມີຄວາມໝາຍໂດຍກົງຕໍ່ການປະຕິບັດໜ້າທີ່ຂອງກຳລັງປ້ອງກັນປະເທດ; ກຳລັງປ້ອງກັນປະເທດ ຕ້ອງຍຶດໝັ້ນຕໍ່ຫຼັກການ, ປະຕິບັດໜ້າທີ່ຕາມກົດໝາຍ, ຮັກສາລະບຽບວິໄນ, ປົກປັກຮັກສາເອກະລາດ, ອະທິປະໄຕ, ເຂດແດນ ແລະ ຄວາມສະຫງົບປອດໄພຂອງຊາດ ພ້ອມທັງຕ້ອງຮັບຮູ້ເຖິງສິດ ແລະ ໜ້າທີ່ຂອງຕົນ, ເຄົາລົບສິດອັນຊອບທຳຂອງປະຊາຊົນແລະຮັກສາຄວາມສາມັກຄີພາຍໃນຊາດ. ການລະນຶກເຖິງວັນລັດຖະທຳມະນູນ ຈຶ່ງບໍ່ແມ່ນພຽງການຈັດງານສະເຫຼີມສະຫຼອງເທົ່ານັ້ນ ແຕ່ເປັນການທົບທວນຄືນບົດຮຽນທາງປະຫວັດສາດ, ຍົກສູງຈິດສຳນຶກດ້ານນິຕິທຳ ແລະ ເຕືອນໃຫ້ທຸກພາກສ່ວນຕັ້ງໜ້າປະຕິບັດຕາມລັດຖະທຳມະນູນແລະກົດໝາຍ.

ການປາຖະກະຖາຄັ້ງນີ້ ເປັນການປູກຈິດສຳນຶກໃຫ້ນາຍ ແລະ ພົນທະຫານ ໄດ້ຮູ້ເຖິງພາລະໜ້າທີ່, ສືບຕໍ່ຮັກສາຜົນງານຂອງບັນພະບຸລຸດ, ປະຕິບັດຕາມແນວທາງຂອງພັກ, ລັດຖະທຳມະນູນ ແລະ ກົດໝາຍ ພ້ອມກັນປົກປັກຮັກສາປະເທດຊາດ ໃຫ້ມີຄວາມສະຫງົບ, ໝັ້ນຄົງ ແລະ ພັດທະນາກ້າວໜ້າຢ່າງຍືນຍົງ.

**ຄັດ ແລະ ຮຽບຮຽງຈາກ ເພຈ: Lao people's Army News**



## ສຸຂະສະບາຍຫາຍໂຣຄາ

ໝາກອາໂວກາໂດ (Avocado) ເປັນໝາກໄມ້ທີ່ອຸດົມໄປດ້ວຍສານອາຫານ ແລະ ວິຕາມິນ ທີ່ມີໂຫຍດຫຼວງຫຼາຍເມື່ອຮັບປະທານເປັນປະຈຳ; ດັ່ງນັ້ນ, ຈຶ່ງສາມາດເວົ້າໄດ້ວ່າອາໂວກາໂດເປັນຊຸບເປີຟູດທີ່ຊ່ວຍບຳລຸງ ແລະ ເສີມສ້າງສຸຂະພາບຮ່າງກາຍໃຫ້ເຂັ້ມແຂງແຖມຍັງສາມາດປ້ອງກັນໂຣກຮ້າຍບາງໂຣກໄດ້ອີກດ້ວຍ ມື້ນີ້ຄໍລຳ "ສຸກສະບາຍ ຫາຍໂລຄາ"

# 7 ຄຸນປະໂຫຍດມະຫັດສະຈັນ ຂອງໝາກອາໂວກາໂດ



ຂໍນຳສະເໜີ 7 ຄຸນປະໂຫຍດມະຫັດສະຈັນ ຂອງໝາກອາໂວກາໂດ ດັ່ງນີ້:

1. ອຸດົມໄປດ້ວຍສານອາຫານ: ປະກອບມີວິຕາມິນ C, E, K, B6, ໂຟເລດ ແລະ ມີໂພແທສຊຽມ (Potassium) ສູງກວ່າໝາກກ້ວຍ.

2. ບຳລຸງຫົວໃຈ ແລະ ຫຼອດເລືອດ: ອຸດົມໄປດ້ວຍໄຂມັນດີ (Monounsaturated Fat) ແລະ ກົດໂອເລອິກ ຊ່ວຍຫຼຸດຄໍເລດເຕີຣອນຊະນິດບໍ່ດີ (LDL).

3. ດີຕໍ່ລະບົບຂັບຖ່າຍ: ມີເສັ້ນໃຍອາຫານ (Fiber) ສູງຫຼາຍ ຊ່ວຍປັບສົມດຸນລຳໄສ້ແລະປ້ອງກັນອາການທ້ອງຜູກ.

4. ບຳລຸງສາຍຕາ: ມີສານ ລູທິນ (Lutein) ແລະ ຊີແຊນທິນ (Zeaxanthin) ທີ່ຊ່ວຍຫຼຸດຄວາມສ່ຽງພະຍາດຈໍປະສາດຕາເສື່ອມ ແລະ ຕໍ້ກະຈົກ.

5. ຕົວຊ່ວຍໃນການຄວບຄຸມນ້ຳໜັກ: ໄຂມັນດີ ແລະ ໄຟເບີໃນອາໂວກາໂດ ຈະຊ່ວຍໃຫ້ຮູ້ສຶກອີ່ມດົນ ແລະ ຫຼຸດຄວາມຢາກອາຫານລະຫວ່າງມື້.

6. ບຳລຸງກະດູກໃຫ້ແຂງແຮງ: ມີວິຕາມິນ K ສູງ ເຊິ່ງສຳຄັນຫຼາຍໃນການຊ່ວຍດູດຊຶມແຄວຊຽມ ແລະ ປ້ອງກັນພາວະກະດູກພຸນ.

7. ບຳລຸງຜິວພັນໃຫ້ສົດໃສ: ວິຕາມິນ C ແລະ E ເຮັດໜ້າທີ່ເປັນສານຕ້ານອະນຸມູນອິດສະຫຼະ ຊ່ວຍປົກປ້ອງຜິວຈາກມົນລະພາວະ ແລະ ຫຼຸດຮອຍຫ່ຽວຍົ່ນ.

ສຳລັບຂໍ້ຄວນລະວັງ: ອາໂວກາໂດ ມີປະລິມານແຄລໍຣີສູງ ຄວນຮັບປະທານໃນປະລິມານເໝາະສົມ ເຖິງແມ່ນວ່າອາໂວກາໂດ ຈະມີປະລິມານໄຂມັນດີສູງ ແຕ່ການບໍລິໂພກໄຂມັນຫຼາຍເກີນໄປ ກໍບໍ່ດີຕໍ່ສຸຂະພາບ.

**ຂໍ້ມູນຈາກ: ປະກາດ Pakaad**




# ເມື່ອອຳນາດໃໝ່ມາມື

**(ເນື່ອງໃນວັນຢຶດອຳນາດ 23 ສິງຫາ)**

**# ຊຽງເອງ**

❊ ທີ 23 ສິງຫາ ແມ່ນມື້
ປວງປະຊາດີໃຈ
ອຳນາດເປັນຂອງເຮົາແລ້ວ
ຍົກຍໍເສີມແຕ່ງແຕ້ມ
ອຳນາດໃໝ່ໃນມື
ຊື່ນຊົມຍໍຍ້ອງ
ຍຸທາງແປງສ້າງກໍ່
ເມືອງບ້ານໃຫ້ຮຸ່ງເຮືອງ ນັ້ນແລ້ວ!

❊ ກ່ອນນັ້ນ ແສນເດືອດຮ້ອນ
ປະຕິການໂຕດີ
ມັນວາງເລ່ກົນຮ້າຍ
ເອົາປະຊາທິປະໄຕແອບອ້າງ
ທົນທຸກທໍລະມານ
ເຫຼົ່າລູກມືເມືອງຂຶ້ນ
ຫວັງທຳລາຍຜູ້ຄິດຕ່າງ
ວາງໄວ້ເພື່ອລວງ

❊ ແມ້ງເມື່ອອຳນາດເຂົ້າ
ໃຫ້ໝັ່ນຮັກສາດູແລ
ເປັນເຄື່ອງມືຄົມກ້າ
ປາບປາມມານໝູ່ຮ້າຍ
ເນົາຢູ່ມືປະຊາ ເຮົານັ້ນນາ
ແກ່ນແຂງທະນົງກ້າ
ຜະເດັດການກຳມະຊີບ
ໃຫ້ຫາຍສິ້ນຈາກແຜ່ນດິນ

❊ ຢ່າໃຫ້ອາຍກິ່ນຮ້າຍ
ສິ່ງກິ່ນເໝັນຄືນມາ
ສໍ້ລາດບັງຫຼວງນັ້ນ
ຕ້ອງເອົາມັນມອດມ້ຽນ
ລະບອບເນົ່າປະຕິການ
ກີດຂວາງຄວາມກ້າວ
ພົນທຸກຳລະບອບເກົ່າ
ຕາຍພ້ອມລະບອບຫຼັງ

❊ ທຸກຢ່າງເຮັດໃຫ້ໄດ້
ຊື່ສັດບໍລິສຸດ
ສາມັກຄີຄືເສົາຄ້ຳ
ພັກນຳພາ-ລັດຄຸ້ມຄອງຢຶດໝັ້ນ
ຄືດັ່ງປະຕິຍານ
ໂປ່ງໃສຈະແຈ້ງ
ເປັນໃຈດຽວເດັດດ່ຽວ
ເດີນກ້າວພັດທະນາ

❊ ສ້າງໃຫ້ດິນຖິ່ນນີ້
ກ້າວດຸ່ງໄປຕາມຍຸກ
ສົມວ່າລາວເປັນເຈົ້າ
ລຶບລ້າງຄວາມທຸກໄຮ້ ມໍລະດົກຊົ່ວຮ້າຍ
ເຮືອງຮຸ່ງສີວິໄລ
ພັດທະນານຳໜ້າ
ດິນແດນເອກະລາດ
ນາຍເມືອງຂຶ້ນເຮັດມາ

❊ ຂໍຈົ່ງເປື້ອງປິ່ນໜ້າ
ເພີ່ມທະວີກຳລັງແຮງ
ອຳນາດມາມືແລ້ວ
ສ້າງສາທາຖິ່ນນີ້
ໃຈໃສ່ສາມັກຄີ
ແກ່ນແຂງຂານສູ້
ກະທຳການເດັດດ່ຽວ
ໃຫ້ທຽມເທົ່າຖິ່ນຈະເລີນ ນັ້ນແລ້ວ!



## ທັກທາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽມຫຼຽນ**

❊ **23 ສິງຫາ** ປະຫວັດຈາລຶກໄວ້ ຜົນງານໃຫຍ່ ປວງຊົນລາວ ເຕົ້າໂຮມຄວາມສາມັກຄີ ອາດຫານຕໍຕ້ານ ທວງສິດອິດສະຫຼະພາບ ຜືນແຜ່ນດິນອັນລ້ຳຄ່າ ບົດແອກເພື່ອຫຼຸດພົ້ນ ອອກຈາກການເປັນຂ້ອຍຂ້າ ປະຊາສຸກຊື່ນຊ້ອຍ ສາກົນຮູ້ທົ່ວເຖິງ **ຂອບແລ້ວ!**

❊ **ການ**ເປີດສົກຮຽນໃໝ່ຫຍັບມໍ່ໃກ້ເຂົ້າມາ ເຫັນວ່າຫຼາຍໂຮງຮຽນກໍໄດ້ ກະກຽມຄວາມພ້ອມຢ່າງຄຶກຄື້ນ ທັງພໍ່ແມ່ ແລະ ນ້ອງນັກຮຽນ ກໍເຊັ່ນດຽວກັນ ພາກັນຫາຊອກຊື້ ອາພອນໃໝ່ຜືນງາມ ທັງສໍສີປາກກາ ເຄື່ອງຊຽນຮຽນແຕ້ມ ມີແຕ່ຄອງຄອຍຖ້າ 1 ກັນຍາ ປະກາດປ່າວ ພາລູກເຂົ້າສູ່ຮົ້ວ ໂຮງຮຽນນັ້ນບ່ອນໝາຍ **ຂອບແລ້ວ!**

### ຂອບຍິ້ມ

**# ພົ້ງລຶງ**

### ເລື່ອງ: ບໍ່ໄຫວແລ້ວ

ຊາຍຄົນໜຶ່ງຮູ້ສຶກເບື່ອໜ່າຍກັບຊີວິດ ຈຶ່ງຄິດຢາກໂດດຂົວເພື່ອຂ້າໂຕຕາຍ, ຕ່າຫຼວດເຫັນແບບນັ້ນ ຈຶ່ງເອີ້ນໃຫ້ແມ່ຂອງລາວມາເກ່ຍກ່ອມ

**ແມ່:** ຢ່າເຮັດແບບນີ້ລູກ ມີຫຍັງລົງມາເວົ້າກັນດີໆ

**ຊາຍຄົນນັ້ນ:** ຂ້ອຍບໍ່ໄຫວ, ຂ້ອຍເມື່ອຍອີຫຼີແມ່

ຕ່າຫຼວດເຫັນແບບນັ້ນຄືຊິບໍ່ເປັນຜົນ ຈຶ່ງໄທເອີ້ນເອົາລູກສາວລາວມາເກ່ຍກ່ອມຕື່ມ

**ລູກສາວ:** ພໍ່ເອີຍ... ພໍ່ລົງມາສາ, ບໍ່ເຮັດແບບນີ້; ພໍ່ບໍ່ຮັກລູກລະຫວາ ບໍ່ຢາກເບິ່ງລູກປະສົບຜົນສຳເລັດລະບໍ່

**ຊາຍຄົນນັ້ນ:** ພໍ່ບໍ່ໄຫວແລ້ວແທ້ໆ ພໍ່ເມື່ອຍຈົນບໍ່ມີອັນຊິເວົ້າແລ້ວ

ຕ່າຫຼວດສັງເກດວ່າຄືຊິບໍ່ເປັນຜົນ; ສຸດທ້າຍ, ຈຶ່ງຕັດສິນໃຈ ໃຫ້ຜູ້ເປັນເມຍເປັນຜູ້ເກ່ຍກ່ອມ

**ຜູ້ເປັນເມຍ:** (ຢືນຄ້ານອວຢ່າງໃນໂທ ທັງເອົ້າຂຶ້ນ) ມຶງຊິລົງມາລະຮີບລົງມາ, ເຄື່ອງນຸ່ງເຕັມອະຍະຢູ່ບິ, ເຄື່ອງຊັກຜ້າເຂົາເຈົ້າເອົາມາສົ່ງແລ້ວ ຮີບລົງມາ ແລ້ວໄປຊັກເຄື່ອງໃຫ້ໄວເລີຍ...

**ຊາຍຄົນນັ້ນ:** (ຍິ້ມຢ່າງດີໃຈ) ກູບໍ່ຕ້ອງເມື່ອຍອີກແລ້ວໂອ້ຍຍຍ!

### ສຸພາສິດ-ຄະຕິເຕືອນໃຈ

***# ດອກຫຍ້າ***

"ກ້ຽງແຕ່ບອກ ທາງໃນເປັນໝາກເດື່ອ
ຫວານບອກເບື້ອ ໃຈສົ້ມດັ່ງໝາກບາວ"

ຂ່າວສະພາຕ່າງປະເທດ

# ຈີນກຳລັງພິຈາລະນາກົດໝາຍຕ້ານການລະເມີດທາງໄຊເບີ



(Xinhua)-ອົງການບໍລິຫານໄຊເບີຂອງຈີນ ໄດ້ເຜີຍແຜ່ຮ່າງກົດໝາຍຕ້ານການລ່ວງລະເມີດທາງໄຊເບີ ເມື່ອວັນພຸດທີ 29 ກໍລະກົດ2026ເພື່ອຂໍຄວາມຄິດເຫັນຈາກສາທາລະນະຊົນ; ຮ່າງກົດໝາຍນີ້ຕອບສະໜອງຕໍ່ ຄວາມກັງວົນຢ່າງກວ້າງຂວາງຂອງສາທາລະນະຊົນ ກ່ຽວກັບອັນຕະລາຍທີ່ເກີດຈາກການລະເມີດທາງໄຊເບີ ແລະ ການຮຽກຮ້ອງທີ່ເພີ່ມຂຶ້ນສຳລັບມາດຕະການທີ່ເຂັ້ມງວດກວ່າເກົ່າເພື່ອແກ້ໄຂບັນຫາດັ່ງກ່າວ.

ພາຍໃຕ້ຮ່າງກົດໝາຍ, ຜູ້ໃຫ້ບໍລິການອິນເຕີເນັດ ຈະຕ້ອງແຈ້ງໃຫ້ຜູ້ໃຊ້ຊາບຢ່າງທັນການ ແລະ ຊັດເຈນ ກ່ຽວກັບຄວາມສ່ຽງທີ່ອາດເກີດຂຶ້ນຈາກການລະເມີດທາງໄຊເບີ, ໃຫ້ບໍລິການປ້ອງກັນການລະເມີດທາງໄຊເບີແກ່ຜູ້ໃຊ້ ແລະ ລາຍງານກໍລະນີດັ່ງກ່າວຕໍ່ເຈົ້າໜ້າທີ່ ຫາກກ່ຽວຂ້ອງກັບເດັກ, ຜູ້ອາຍຸສູງ ຫຼື ຜູ້ພິການ; ຮ່າງກົດໝາຍຍັງລະບຸອີກວ່າ ຫາກຜູ້ໃຫ້ບໍລິການອິນເຕີເນັດບໍ່ປະຕິບັດມາດຕະການທີ່ຈຳເປັນເພື່ອຢຸດຕິການກະທຳທີ່ຖືກຢືນຢັນວ່າ ເປັນການລະເມີດທາງໄຊເບີ, ຜູ້ເຄາະຮ້າຍສາມາດຍື່ນຄຳຮ້ອງຕໍ່ສານທ້ອງຖິ່ນເພື່ອຂໍຄຳສັ່ງໃຫ້ຜູ້ກະທຳຜິດຢຸດຕິການກະທຳແລະກຳນົດໃຫ້ສານຕ້ອງຮັບຄຳຮ້ອງດັ່ງກ່າວ.

ໃນກໍລະນີທີ່ການກະທຳລະເມີດທາງໄຊເບີເປັນອັນຕະລາຍຕໍ່ຜົນປະໂຫຍດຂອງຊາດ ຫຼື ສາທາລະນະ, ໄອຍະການ ຫຼື ອົງການທີ່ໄດ້ຮັບການແຕ່ງຕັ້ງໂດຍເຈົ້າໜ້າທີ່ບໍລິຫານໄຊເບີ ອາດຈະເລີ່ມດຳເນີນການຟ້ອງຮ້ອງເພື່ອ ຜົນປະໂຫຍດສາທາລະນະ.

ຕາມຖະແຫຼງການລະບຸວ່າ ຮ່າງກົດໝາຍສະບັບນີ້ຈະເປີດໃຫ້ປະຊາຊົນສະແດງຄວາມຄິດເຫັນຈົນຮອດ ວັນທີ 28 ສິງຫານີ້.

# Benin ສ້າງຕັ້ງສະພາສູງຊຸດທຳອິດ ແລະ ຮັບຮອງລະບົບລັດຖະສະພາສອງສະພາ




(Xinhua) - ສາທາລະນະລັດເບແນັງ ໄດ້ສ້າງຕັ້ງສະພາສູງຊຸດທຳອິດຢ່າງເປັນທາງການໃນວັນພະຫັດທີ 30 ກໍລະກົດ 2026 ເຊິ່ງຖືເປັນການປ່ຽນຜ່ານຂອງປະເທດໄປສູ່ລະບົບລັດຖະສະພາສອງສະພາເປັນຄັ້ງທຳອິດ; ພິທີສ້າງຕັ້ງໄດ້ຈັດຂຶ້ນທີ່ອາຄານສະພາແຫ່ງຊາດໃນນະຄອນຫຼວງປອກໂຕ-ໂນໂວ (Porto-Novo) ໂດຍການເປັນປະທານຂອງ ນາງ ເອລີຊາເບດ ໂປຍົງ (Elisabeth Pognon) ອະດີດປະທານສານລັດຖະທຳມະນູນ.

ການສ້າງຕັ້ງສະພາສູງເກີດຂຶ້ນຫຼັງຈາກມີການປັບປຸງລັດຖະທຳມະນູນເມື່ອວັນທີ 17 ທັນວາ 2025 ເຊິ່ງປ່ຽນສະພານິຕິບັນຍັດ ຈາກລະບົບລັດຖະສະພາດຽວ ໄປເປັນລະບົບລັດຖະສະພາສອງສະພາປະກອບດ້ວຍສະພາແຫ່ງຊາດ ແລະ ສະພາສູງ.

ໃນຄຳປາໄສ, ໂປຍົງກ່າວວ່າການສ້າງຕັ້ງສະພາສູງ ມີຈຸດປະສົງເພື່ອປັບປຸງລະບົບການປົກຄອງຂອງປະເທດ, ເສີມສ້າງຄວາມເຊື່ອໝັ້ນຂອງປະຊາຊົນຕໍ່ສະຖາບັນຂອງລັດແລະສົ່ງເສີມສະຖຽນລະພາບທາງການເມືອງ; ນາງຕັ້ງຂໍ້ສັງເກດວ່າ, ຕ່າງຈາກສານລັດຖະທຳມະນູນ ເຊິ່ງເຮັດໜ້າທີ່ຕັດສິນຂໍ້ຂັດແຍ້ງທາງກົດໝາຍ, ສະພາສູງ ໄດ້ຮັບມອບໝາຍພາຍໃຕ້ລັດຖະທຳມະນູນ ເພື່ອຄວບຄຸມ ແລະປະສານງານຊີວິດທາງການເມືອງ.

ພາຍໃຕ້ລັດຖະທຳມະນູນ, ສະພາສູງມີໜ້າທີ່ຮັກສາຄວາມເປັນເອກະພາບຂອງຊາດ, ເສີມສ້າງຄວາມໝັ້ນຄົງຂອງລັດ, ສົ່ງເສີມສະຖຽນລະພາບທາງການເມືອງ, ປະຊາທິປະໄຕ ແລະ ສັນຕິພາບ, ແລະ ຮັບປະກັນການເຄົາລົບຂໍ້ຕົກລົງຢຸດຍິງທາງການເມືອງ; ພາຍໃຕ້ເງື່ອນໄຂທີ່ກຳນົດໄວ້ໃນລັດຖະທຳມະນູນ, ສະພາສູງຍັງສາມາດບັງຄັບໃຊ້ມາດຕະການລົງໂທດ, ລວມທັງອຳນາດໃນການໂຈະ ຫຼື ຖອນສິດທາງການເມືອງ ຫຼື ສິດພົນລະເມືອງຕໍ່ຜູ້ມີບົດບາດທາງການເມືອງບາງຄົນ.

ນອກຈາກນີ້, ສະພາສູງຍັງຕ້ອງອອກຄວາມເຫັນວ່າບໍ່ມີຂໍ້ຄັດຄ້ານກ່ອນທີ່ຈະມີການປະກາດໃຊ້ການປັບປຸງລັດຖະທຳມະນູນ, ກົດໝາຍການເລືອກຕັ້ງ, ແລະ ກົດໝາຍທີ່ຄວບຄຸມພັກການເມືອງ ແລະ ກິດຈະກຳຂອງພວກເຂົາ.

ຕາມລາຍຊື່ທີ່ລັດຖະບານເຜີຍແຜ່ເມື່ອວັນທີ 1 ກໍລະກົດ, ສະພາສູງຊຸດທຳອິດປະກອບດ້ວຍສະມາຊິກ 25 ຄົນ, ລວມມີອະດີດປະທານາທິບໍດີ 3 ຄົນ ພ້ອມທັງອະດີດຫົວໜ້າສະຖາບັນຂອງລັດ ແລະ ອະດີດເຈົ້າໜ້າທີ່ລະດັບສູງຈາກຂະແໜງການປ້ອງກັນປະເທດ ແລະ ຄວາມໝັ້ນຄົງ.

# ປະທານສະພາ Bangladesh ເຂົ້າຮັບຕຳແໜ່ງປະທານາທິບໍດີ


ຮາຟີຊ ອຸດດິນ ອາໝັດ (ທີ 2 ຈາກຂວາ)

(Xinhua) - ສຳນັກງານເລຂາທິການສະພາແຫ່ງຊາດບັງກລາເທດ ຢືນຢັນກັບສື່ມວນຊົນເມື່ອວັນສຸກທີ 24 ກໍລະກົດ 2026 ວ່າ ຮາຟີຊ ອຸດດິນ ອາໝັດ (Hafiz Uddin Ahmad) ປະທານສະພາແຫ່ງຊາດ ໄດ້ເລີ່ມປະຕິບັດໜ້າທີ່ປະທານາທິບໍດີຕາມລັດຖະທຳມະນູນແລ້ວ ພາຍຫຼັງການລາອອກຂອງ ໂມຮຳເໝັດ ຊາຮາບຸດດິນ ຊຸບປູ (Mohammed Shahabuddin Chuppu), ໂມຮຳໝັດ ຊາວາ ອາລຳ (Md Sarwar Alam) ເລຂານຸການຝ່າຍສື່ມວນຊົນຂອງປະທານາທິບໍດີ ກ່າວກັບຊິນຮວາວ່າ ຊາຮາບຸດດິນ ໄດ້ຍື່ນໜັງສືລາອອກທີ່ລົງນາມແລ້ວຕໍ່ປະທານສະພາແຫ່ງຊາດ ໂດຍອ້າງເຫດຜົນອາການເຈັບປ່ວຍຮ້າຍແຮງ.

ພາຍໃຕ້ລັດຖະທຳມະນູນຂອງບັງກລາເທດ, ປະທານສະພາແຫ່ງຊາດ ຈະປະຕິບັດໜ້າທີ່ປະທານາທິບໍດີຈົນກວ່າຈະມີການເລືອກຕັ້ງປະມຸກລັດຜູ້ໃໝ່.

“ຂ້າພະເຈົ້າເຈັບປ່ວຍໜັກ; ຂ້າພະເຈົ້າເປັນພະຍາດຫົວໃຈ, ຄວາມດັນເລືອດສູງ, ເບົາຫວານ ແລະ ພາວະແຊກຊ້ອນຂອງໝາກໄຂ່ຫຼັງ; ຂ້າພະເຈົ້າເຄີຍຜ່າຕັດຫົວໃຈມາແລ້ວ. ການກວດສຸຂະພາບເມື່ອບໍ່ດົນມານີ້ຍັງພົບວ່າ ຂ້າພະເຈົ້າມີຄວາມຜິດປົກກະຕິຂອງລະບົບປະສາດອັດຕະໂນມັດ, ເຊິ່ງເຮັດໃຫ້ຂ້າພະເຈົ້າໝົດສະຕິຊົ່ວຄາວ” ຊາຮາບຸດດິນ ກ່າວໃນຈົດໝາຍລາອອກ ທັງກ່າວຕື່ມວ່າ “ເນື່ອງຈາກຄວາມບໍ່ສາມາດທາງດ້ານຮ່າງກາຍ ແລະ ຈິດໃຈທີ່ເກີດຈາກພະຍາດເຫຼົ່ານີ້, ຂ້າພະເຈົ້າຈຶ່ງບໍ່ສາມາດປະຕິບັດໜ້າທີ່ໃນຕຳແໜ່ງສຳຄັນຕາມລັດຖະທຳມະນູນ ເຊັ່ນຕຳແໜ່ງປະທານາທິບໍດີ; ຂ້າພະເຈົ້າຈຳເປັນຕ້ອງໄດ້ຮັບການປິ່ນປົວທາງການແພດໃນໄລຍະຍາວ”.

ອາໝັດ ກ່າວວ່າ ຄຳສາບານຕົນທີ່ເຂົາໄດ້ໃຫ້ໄວ້ເມື່ອເຂົ້າຮັບຕຳແໜ່ງປະທານສະພາແຫ່ງຊາດ ໄດ້ກວມເອົາການປະຕິບັດໜ້າທີ່ຂອງປະທານາທິບໍດີເມື່ອໃດກໍຕາມທີ່ຈຳເປັນ; ເຂົາເນັ້ນໜັກວ່າ ການຈັດລະບຽບຕາມລັດຖະທຳມະນູນຮັບປະກັນວ່າຈະບໍ່ມີຊ່ອງວ່າງໃນການປະຕິບັດໜ້າທີ່ຂອງປະທານາທິບໍດີ.

ຊາຮາບຸດດິນອະດີດຜູ້ພິພາກສາ ແລະ ອະດີດກຳມະການຂອງຄະນະກຳມະການຕ້ານການສໍ້ລາດບັງຫຼວງ ໄດ້ເຂົ້າຮັບຕຳແໜ່ງປະທານາທິບໍດີຄົນທີ 22 ຂອງບັງກລາເທດ ໃນເດືອນເມສາ 2023.

ພາຍໃຕ້ລັດຖະທຳມະນູນ, ການເລືອກຕັ້ງປະທານາທິບໍດີຈະຕ້ອງຈັດຂຶ້ນພາຍໃນ 90 ວັນ ນັບຈາກວັນທີປະທານາທິບໍດີລາອອກ,ລັດຖະມົນຕີກະຊວງກົດໝາຍ ໂມຮຳໝັດ ອັສຊາດູຊຊາມານ (Md Asaduzzaman) ກ່າວກັບນັກຂ່າວເມື່ອວັນເສົາທີ 24 ກໍລະກົດ.

ກອງປະຊຸມຄັ້ງທີ 2 ຂອງສະພາແຫ່ງຊາດ ສິ້ນສຸດລົງເມື່ອວັນທີ 15 ກໍລະກົດ; ກອງປະຊຸມຄັ້ງທີ 3 ຈະຕ້ອງຈັດຂຶ້ນພາຍໃນສອງເດືອນ, ຄືພາຍໃນວັນທີ 14 ກັນຍານີ້.

ຕາມລັດຖະທຳມະນູນ, ສະມາຊິກສະພາແຫ່ງຊາດ ເປັນຜູ້ມີສິດລົງຄະແນນສຽງໃນການເລືອກຕັ້ງປະທານາທິບໍດີ.

ເນື່ອງຈາກພັກຊາດນິຍົມບັງກລາເທດຂອງນາຍົກລັດຖະມົນຕີທາຣິກຣາມານ(TariqueRahman) ມີສຽງສ່ວນຫຼາຍໃນສະພາແຫ່ງຊາດ, ຈຶ່ງມີການຄາດການຢ່າງກວ້າງຂວາງວ່າຜູ້ທີ່ໄດ້ຮັບການສະເໜີຊື່ຈາກພັກນີ້ ຈະຖືກເລືອກເປັນປະທານາທິບໍດີຄົນຕໍ່ໄປ.

# ສະພາຮົງກາລີ ອະນຸມັດຮ່າງກົດໝາຍ ສ້າງຕັ້ງສຳນັກງານກູ້ຄືນຊັບສິນແຫ່ງຊາດ



(Xinhua) - ວັນອັງຄານທີ28ກໍລະກົດ2026, ສະພາແຫ່ງຊາດຮົງກາລີ ໄດ້ອະນຸມັດຮ່າງກົດໝາຍ ວ່າດ້ວຍການສ້າງຕັ້ງສຳນັກງານກູ້ຄືນ ແລະ ຄຸ້ມຄອງຊັບສິນແຫ່ງຊາດ (National Asset RecoveryandProtection Office) ເຊິ່ງເປັນການປະຕິບັດຕາມຄຳໝັ້ນສັນຍາສຳຄັນໃນການໂຄສະນາຫາສຽງຂອງພັກ Tisza ຂອງນາຍົກລັດຖະມົນຕີ ປີເຕີ ມາກຢາ(PeterMagyar) ເພື່ອຕ້ານການສໍ້ລາດບັງຫຼວງ ແລະ ກູ້ຄືນເງິນທຶນສາທາລະນະທີ່ຖືກຍັກຍອກ; ຮ່າງກົດໝາຍດັ່ງກ່າວ ຜ່ານການລົງມະຕິດ້ວຍຄະແນນສຽງເຫັນດີ 143 ສຽງ ແລະ ຄັດຄ້ານ 47 ສຽງ.

ພາຍໃຕ້ກົດໝາຍໃໝ່ນີ້, ສຳນັກງານດັ່ງກ່າວຈະດຳເນີນງານຢ່າງອິດສະຫຼະ ແລະ ລາຍງານໂດຍກົງຕໍ່ສະພາແຫ່ງຊາດ; ສະມາຊິກສະພາແຫ່ງຊາດ ຈະເລືອກປະທານ ແລະ ຮອງປະທານ ພາຍໃນ 30 ວັນ ຫຼັງຈາກກົດໝາຍມີຜົນບັງຄັບໃຊ້.

ລັດຖະບານລະບຸວ່າ ສະຖາບັນນີ້ ມີຈຸດປະສົງເພື່ອສືບສວນຂໍ້ກ່າວຫາກ່ຽວກັບການສໍ້ລາດບັງຫຼວງຢ່າງເປັນລະບົບໃນການນຳໃຊ້ຊັບສິນສາທາລະນະ ໃນໄລຍະຫຼາຍທົດສະວັດທີ່ຜ່ານມາ, ໂດຍເນັ້ນໜັກວ່າການເປີດເຜີຍການສູນເສຍຊັບສິນຂອງລັດ ແມ່ນມີຄວາມສຳຄັນຕໍ່ການຟື້ນຟູຄວາມໄວ້ວາງໃຈຂອງປະຊາຊົນ ແລະ ຮັບປະກັນການປົກຄອງທີ່ໂປ່ງໃສ.

ສຳນັກງານດັ່ງກ່າວ ຈະມີອຳນາດສືບສວນຢ່າງກວ້າງຂວາງກ່ອນທີ່ຈະເລີ່ມດຳເນີນຄະດີອາຍາ. ອຳນາດຂອງສຳນັກງານນີ້ ລວມມີການປະເມີນຄວາມສ່ຽງ ແລະ ການເຂົ້າເຖິງລາຍລະອຽດຂອງບັນຊີທະນາຄານ, ທະບຽນສາທາລະນະ ແລະ ບັນທຶກທາງການ; ຂະນະດຽວກັນ, ກໍຮ່ວມມືກັບຕຳຫຼວດ, ໄອຍະການ, ແລະ ອົງການບໍລິຫານພາສີແລະອາກອນແຫ່ງຊາດ.

ການສ້າງຕັ້ງສຳນັກງານນີ້ແມ່ນຄຳໝັ້ນສັນຍາຕົ້ນຕໍຂອງພັກ Tisza ໃນລະຫວ່າງການໂຄສະນາຫາສຽງເລືອກຕັ້ງປີ 2026; ມາກຢາ ສະເໜີແນວຄິດນີ້ຄັ້ງທຳອິດໃນເດືອນກໍລະກົດ 2025 ໂດຍສັນຍາວ່າຈະສືບສວນຄະດີສໍ້ລາດບັງຫຼວງຂະໜາດໃຫຍ່, ກວດຄືນຂໍ້ຕົກລົງສຳປະທານ ແລະ ກວດສອບການຄຸ້ມຄອງຊັບສິນຂອງລັດ ພາຍໃຕ້ລັດຖະບານຊຸດກ່ອນໆ.

ຮ່າງກົດໝາຍນີ້ຖືກນຳສະເໜີຕໍ່ສະພາແຫ່ງຊາດໃນຕົ້ນເດືອນກໍລະກົດ ຫຼັງຈາກພັກ Tisza ໄດ້ຮັບໄຊຊະນະສຽງສ່ວນຫຼາຍ(141 ຈາກທັງໝົດ 199 ທີ່ນັ່ງ) ໃນການເລືອກຕັ້ງທົ່ວໄປ ເມື່ອເດືອນເມສາຜ່ານມາ.

ຫຼັງຈາກການລົງຄະແນນສຽງໃນວັນອັງຄານ, ມາກຢາ ໄດ້ສະແດງຄວາມຍິນດີຕໍ່ການຜ່ານຮ່າງກົດໝາຍດັ່ງກ່າວຜ່ານສື່ສັງຄົມອອນລາຍ, ໂດຍກ່າວວ່າ ສຳນັກງານນີ້ ອາດເລີ່ມດຳເນີນການໃນອີກບໍ່ເທົ່າໃດເດືອນຂ້າງໜ້າເມື່ອມີການແຕ່ງຕັ້ງຜູ້ນຳແລ້ວ.

ກົດໝາຍສະບັບນີ້ມີຂຶ້ນຫຼັງຈາກຮົງກາລີໄດ້ຮັບການອະນຸມັດຂັ້ນສຸດທ້າຍຈາກສະຫະພາບເອີຣົບ (EU) ໃນຕົ້ນເດືອນກໍລະກົດນີ້ສຳລັບແຜນການຟື້ນຟູ ແລະ ສ້າງຄວາມຢືດຢຸ່ນສະບັບປັບປຸງໃໝ່ ແລະ ການເຂົ້າຮ່ວມສຳນັກງານໄອຍະການສາທາລະນະແຫ່ງເອີຣົບ (European Public Prosecutor's Office-EPPO)ເຊິ່ງເປັນບາດກ້າວສຳຄັນທີ່ລັດຖະບານເນັ້ນຢ້ຳໃນຄວາມພະຍາຍາມທີ່ກວ້າງຂຶ້ນ ເພື່ອເສີມສ້າງມາດຕະການຕ້ານການສໍ້ລາດບັງຫຼວງ ແລະ ປົກປ້ອງເງິນທຶນຂອງEU ທີ່ຖືກລະງັບໄວ້.




## ປະກາດ...

(ຕໍ່ຈາກໜ້າ 1)

ຄຳສະໄໝ ສຳມາວົງ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ ໄດ້ອ່ານມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 186/ຄປຈ, ລົງວັນທີ 08/7/2026 ວ່າດ້ວຍການແຕ່ງຕັ້ງທ່ານ ບຸນເລື່ອມ ມະນີວົງ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ເປັນປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ ແລະ ທ່ານ ສຳນານ ສິນທະນີ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ເປັນຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ; ສະບັບເລກທີ 187/ຄປຈ, ລົງວັນທີ 08/7/2026 ວ່າດ້ວຍການແຕ່ງຕັ້ງທ່ານ ເພັງນິລັນ ຄຳພັນເພັງ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ເປັນປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ແລະ ທ່ານ ນາງ ໄກຍະສອນ ສີດາ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ເປັນຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ.

ໂອກາດເຂົ້າຮ່ວມພິທີປະກາດການຈັດຕັ້ງດັ່ງກ່າວ, ທ່ານ ມອນໄຊ ລາວມົວຊົ່ງ ໄດ້ຕີລາຄາສູງ ແລະ ສະແດງຄວາມຊົມເຊີຍຕໍ່ຜົນງານ ແລະ ຜົນສຳເລັດຮອບດ້ານຂອງແຂວງພາຍໃຕ້ການນຳພາ-ຊີ້ນຳຂອງຄະນະພັກ, ອຳນາດການປົກຄອງຂອງແຂວງທັງສະແດງຄວາມຊົມເຊີຍຕໍ່ບັນດາທ່ານທີ່ໄດ້ຖືກແຕ່ງຕັ້ງເປັນຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະແດງຄວາມເຊື່ອໝັ້ນວ່າ ຈະນຳພາ-ຊີ້ນຳວຽກງານ ຄສຊ ປະຈຳເຂດເລືອກຕັ້ງຂອງຕົນ ໂດຍຕ້ອງມີການວາງແຜນການເຄື່ອນໄຫວເປັນແຕ່ລະໄລຍະ; ມີການສະຫຼຸບຕີລາຄາລາຍງານຂັ້ນເທິງ ໂດຍອີງໃສ່ແຜນການເຄື່ອນໄຫວຂອງ ສພຊ, ຄປຈ ສພຊ ກໍຄືຄະນະພັກແຂວງວາງອອກ ທັງປະສານສົມທົບກັບ ຄປຈສພຂ ກໍຄືອຳນາດການປົກຄອງແຂວງ ເພື່ອຄົ້ນຄວ້າຈັດຕັ້ງຜັນຂະຫຍາຍບັນດາແຜນງານ, ໂຄງການ ທີ່ ສພຊ ວາງອອກ ໃນ 5 ປີຕໍ່ໜ້າ ໂດຍໃຫ້ສອດຄ່ອງກັບຈຸດພິເສດ, ຄວາມເປັນຈິງ ແລະ ທ່າແຮງຂອງເຂດເລືອກຕັ້ງຂອງຕົນ; ມີກົນໄກການປະສານງານກັບບັນດາກົງຈັກການຈັດຕັ້ງຂອງ ສພຊ ໃນການປະຕິບັດສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ຕາມ 3 ພາລະບົດບາດທີ່ກົດໝາຍກຳນົດໄວ້.

ທ່ານຮອງປະທານສະພາແຫ່ງຊາດ ໄດ້ສະເໜີໃຫ້ອຳນາດການປົກຄອງແຂວງກໍຄືອຳນາດການປົກຄອງທຸກຂັ້ນ, ອົງການຈັດຕັ້ງຂັ້ນແຂວງ ຈົ່ງໄດ້ໃຫ້ການຮ່ວມມື, ສະໜັບສະໜູນການເຄື່ອນໄຫວຂອງສະພາປະຊາຊົນແຂວງ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ກໍຄືສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ ດ້ວຍການສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຂອງ ສສຊ -ສສຂ ເພື່ອເຮັດສຳເລັດໜ້າທີ່ໃນການເປັນຕົວແທນແຫ່ງສິດ ແລະຜົນປະໂຫຍດຂອງປະຊາຊົນໃນເຂດເລືອກຕັ້ງຂອງຕົນ.

**(ນາງ ກຸກກິກ ບຸດດາໄຊ)**





## ສຳມະນາ...

(ຕໍ່ຈາກໜ້າ 1)

(ສພຊ) - ກອງປະຊຸມສຳມະນາກ່ຽວກັບກົນໄກການປະສານງານ ແລະ ການຄົ້ນຄວ້າຮ້ອງຂໍຄວາມເປັນທຳ ຂອງບັນດາກຳມາທິການສະພາແຫ່ງຊາດ ໄດ້ຈັດຂຶ້ນລະຫວ່າງວັນທີ17-18 ສິງຫາ 2026 ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການກົດໝາຍ ແລະ ຍຸຕິທຳ, ມີບັນດາທ່ານຮອງປະທານກຳມາທິການ,ຮອງຫົວໜ້າຫ້ອງວ່າການ, ຄະນະກົມ ແລະ ພະນັກງານທີ່ກ່ຽວຂ້ອງພາຍໃນສະພາແຫ່ງຊາດ ພ້ອມດ້ວຍຜູ້ຕາງໜ້າ ແລະຊ່ຽວຊານຈາກອົງການຈັດຕັ້ງສາກົນເຂົ້າຮ່ວມທັງໝົດ 71 ທ່ານ.

ທ່ານ ນາງ ທຸມມາລີ ວົງພະຈັນ ກ່າວວ່າ: ຈຸດປະສົງກອງປະຊຸມຄັ້ງນີ້ ເພື່ອສ້າງຄວາມຮັບຮູ້, ຄວາມເຂົ້າໃຈ ແລະ ຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດວຽກງານການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ໂດຍສະເພາະແມ່ນການຮັບຄຳຮ້ອງຂໍຄວາມເປັນທຳຜ່ານປະຕູດຽວ ແລະ ການຄົ້ນຄວ້າແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງກຳມາທິການກົດໝາຍ ແລະ ຍຸຕິທຳກໍຄືກຳມາທິການພາຍໃນສະພາແຫ່ງຊາດ ໃຫ້ມີຄວາມຖືກຕ້ອງ, ສອດຄ່ອງຕາມຂັ້ນຕອນຂອງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງ; ເພື່ອປັບປຸງເຮັດໃຫ້ກົນໄກການປະສານງານໃນການຄົ້ນຄວ້າແກ້ໄຂຄຳຮ້ອງຂໍຄວາມເປັນທຳລະຫວ່າງກຳມາທິການກົດໝາຍ ແລະ ຍຸຕິທຳ ກັບບັນດາກຳມາທິການພາຍໃນສະພາແຫ່ງຊາດມີຄວາມໂລ່ງລ່ຽນ, ກົມກຽວ, ວ່ອງໄວ, ຊັດເຈນ, ມີປະສິດທິພາບ, ປະສິດທິຜົນ ແລະ ຖືກຕ້ອງຕາມນິຕິກຳໃຕ້ກົດໝາຍທີ່ກຳນົດໄວ້;ເພື່ອປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບປີ 2022 ແລະ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ສະບັບເລກທີ 07/ຄປຈ, ລົງວັນທີ 09 ມັງກອນ 2023 ເພື່ອເປັນບ່ອນອີງໃນການປັບປຸງກົດໝາຍດັ່ງກ່າວໃນປີ2027.

ກອງປະຊຸມໄດ້ຮັບຟັງການສະເໜີບົດຮຽນ ແລະ ວິທີການປະຕິບັດທີ່ດີ ໃນການຮັບ ແລະ ແກ້ໄຂຄຳຮ້ອງທຸກຂອງປະຊາຊົນ ຈາກຊ່ຽວຊານຕ່າງປະເທດ, ການຮັບ ແລະ ຄົ້ນຄວ້າພິຈາລະນາຄຳຮ້ອງຂໍຄວາມເປັນທຳຂອງກຳມາທິການກົດໝາຍ ແລະ ຍຸຕິທຳ, ກົນໄກການປະສານງານໃນການຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳ ລະຫວ່າງກຳມາທິການກົດໝາຍ ແລະ ຍຸຕິທຳ ກັບກຳມາທິການສະພາແຫ່ງຊາດ, ຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບປີ 2022 ໃນໄລຍະຜ່ານມາ ເພື່ອປະເມີນຄືນຜົນການຈັດຕັ້ງປະຕິບັດ ແລະ ປຶກສາຫາລືໃນການປັບປຸງກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ; ພ້ອມກັນນັ້ນ, ຍັງໄດ້ແລກປ່ຽນຄຳຄິດຄຳເຫັນ ແລະ ບົດຮຽນເຊິ່ງກັນແລະກັນ ເພື່ອຊອກໃຫ້ເຫັນບັນຫາ, ຂໍ້ຄຸດຕັນ ແລະ ຂອດການຈັດຕັ້ງປະຕິບັດ, ນິຕິກຳທີ່ຍັງບໍ່ທັນສອດຄ່ອງ ເພື່ອສືບຕໍ່ຄົ້ນຄວ້າປັບປຸງແກ້ໄຂ. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນຈັດແບ່ງເປັນກຸ່ມ ເພື່ອຄົ້ນຄວ້າ, ປະກອບຄຳເຫັນ, ປຶກສາຫາລື, ຖອດຖອນບົດຮຽນຕໍ່ບັນດາເນື້ອໃນເຫຼົ່ານີ້ຢ່າງເລິກເຊິ່ງ, ກວ້າງຂວາງ ແລະ ຕາງໜ້າແຕ່ລະກຸ່ມຂຶ້ນສະເໜີບົດຮຽນ, ເຮັດໃຫ້ກອງປະຊຸມດຳເນີນໄປດ້ວຍບັນຍາກາດຟົດຟື້ນ.

ໃນວັນປິດກອງປະຊຸມ, ທ່ານ ກອງແກ້ວ ໄຊສົງຄາມ ຮອງປະທານສະພາແຫ່ງຊາດ ຜູ້ຊີ້ນຳກຳມາທິການກົດໝາຍ ແລະ ຍຸຕິທຳໄດ້ໂອ້ລົມ ໂດຍມີບາງຄຳເຫັນເນັ້ນໜັກໃຫ້ຍົກສູງຂີດຄວາມສາມາດ ເພື່ອຮັບປະກັນໃຫ້ພະນັກງານ-ລັດຖະກອນ ມີຄຸນທາດການເມືອງໜັກແໜ້ນ, ມີຄວາມຮູ້ທາງດ້ານວິຊາສະເພາະທີ່ຕົນຮັບຜິດຊອບ, ມີຈັນຍາບັນຈັນຍາທຳ, ເຫັນແກ່ຜົນປະໂຫຍດສ່ວນລວມເປັນຕົ້ນຕໍ ແລະ ບໍລິການຮັບໃຊ້ປະຊາຊົນຢ່າງແທ້ຈິງ;ສືບຕໍ່ຄົ້ນຄວ້າແລະປັບປຸງບັນດານິຕິກຳທີ່ພົວພັນກັບການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ເພື່ອໃຫ້ກາຍເປັນເຄື່ອງມືທີ່ສຳຄັນແກ່ການປະຕິບັດວຽກງານມີຜົນສຳເລັດ; ປັບປຸງກົນໄກ, ແບບແຜນ ແລະ ວິທີເຮັດວຽກໃນການຮັບ ແລະ ພິຈາລະນາ ໃຫ້ມີຄວາມເປັນເອກະພາບ, ກົມກຽວ, ວ່ອງໄວ, ໂປ່ງໃສ ແລະ ຍຸຕິທຳ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ; ບັນຈຸສັບຊ້ອນພະນັກງານ-ລັດຖະກອນ ເຂົ້າໃນວຽກງານການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ໃຫ້ເປັນລະບົບ, ຄົບຊຸດ, ຮັບປະກັນທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ສອດຄ່ອງ ແລະ ແທດເໝາະກັບລະດັບວິຊາສະເພາະ, ຄວາມຮູ້, ຄວາມສາມາດ ເພື່ອແກ້ໄຂບັນຫາຜູ້ໜຶ່ງຮັບຜິດຊອບຫຼາຍຄຳຮ້ອງແລະສາມາດແກ້ໄຂທັນຕາມກຳນົດເວລາທີ່ກົດໝາຍກຳນົດ; ເພີ່ມທະວີ ແລະ ຍົກສູງຄຸນນະພາບການປະຕິບັດພາລະບົດບາດຕິດຕາມກວດກາການປະຕິບັດໜ້າທີ່ຂອງອົງການທີ່ກ່ຽວຂ້ອງ ໃນຂະບວນການດຳເນີນຄະດີ ໃຫ້ມີຄວາມຖືກຕ້ອງ, ສອດຄ່ອງຕາມລັດຖະທຳມະນູນ ແລະ ກົດໝາຍ ໃນຖານະເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນ, ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ຍຸຕິທຳ ຂຶ້ນເທື່ອລະກ້າວ; ສືບຕໍ່ ແລະ ສູ້ຊົນພິຈາລະນາ ແລະແກ້ໄຂຄຳຮ້ອງຂໍຄວາມເປັນທຳ ຕາມຄາດໝາຍທີ່ກຳນົດໄວ້ທີ່ 85% ຂອງຈຳນວນຄຳຮ້ອງຂໍຄວາມເປັນທຳທັງໝົດ ພ້ອມທັງເອົາໃຈໃສ່ແກ້ໄຂບັນດາຂໍ້ຄົງຄ້າງໄລຍະຜ່ານມາ ໃຫ້ມີການຫັນປ່ຽນຢ່າງຕັ້ງໜ້າ ແລະ ມີລັກສະນະບຸກທະລຸດີຂຶ້ນກວ່າເກົ່າ ທັງ 4 ດ້ານ ໂດຍສະເພາະແມ່ນບຸກທະລຸດ້ານຈິນຕະນາການແລະດ້ານການພັດທະນາຊັບພະຍາກອນມະນຸດ;ປັບປຸງກົນໄກການປະສານງານກັບອົງການທີ່ກ່ຽວຂ້ອງເປັນຕົ້ນ: ລັດຖະບານ, ອົງການປົກຄອງທ້ອງຖິ່ນ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດ, ອົງການປະຕິບັດຄຳຕັດສິນຂອງສານ ແລະ ພາກສ່ວນກ່ຽວຂ້ອງທີ່ຮັບຜິດຊອບພິຈາລະນາ ແລະ ແກ້ໄຂຄຳຮ້ອງທຸກຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃຫ້ມີຄວາມເປັນເອກະພາບ ແລະ ເປັນທີ່ສິ້ນສຸດ ຕາມລັດຖະທຳມະນູນ ແລະ ກົດໝາຍ.

**(ສອນສັກ ວັນວິໄຊ)**




*#ບ່າວກະບື*

**ພິລາ:** "ເດືອນແລ້ວນີ້ ຂີ້ຕົມຕອນນ້ອຍໆເຂົ້າຕາເມຍເຮົາ, ເຮົາຕ້ອງຈ່າຍເງິນສາມແສນກີບເພື່ອລ້າງຕາໃຫ້ລາວ"

**ດວງເດັ່ນ:** "ອັນນັ້ນມັນຂີ້ຝອຍດອກ, ທິດແລ້ວນີ້ແຫວນເພັດປີວເຂົ້າຕາເມຍເຮົາ ແລະ ເຮົາຕ້ອງຈ່າຍເປັນພັນໆໂດລາເພື່ອລ້າງຕາໃຫ້ລາວ"

***#BAOKBU***

PHILA: "Last month a little mud got into my wife's eye and it cost me 300,000 kip to have it washed"

PUANGDEN: "Well. that' absolutely nothing, Last week, a diamond ring got into my wife's eye and it cost me thousands of dollars to have it washed"



**ຜູ້ຊີ້ນຳ**

ທ່ານ ເຂັມພອນ ອາໂນໄທ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ

**ຄະນະບັນນາທິການ**

ທ່ານ ບໍ ຫານປະເສີດ ຫົວໜ້າ ບກ
ທ່ານ ເອລາວັນ ພັນທະລາວົງ ຮອງຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**

ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**

ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**

ທ່ານ ສອນສັກ ວັນວິໄຊ
ທ່ານ ອານຸສອນ ພູມມີຫອນ